**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງປ້ອງກັນຄວາມສະຫງົບ

ກົມໃຫຍ່ພະລາທິການ

ກົມຄຸ້ມຄອງພາຫະນະ-ຂົນສົ່ງ

ເລກທີ 811 /ກພສ

ນະຄອນຫຼວງວຽງຈັນ, ວັນທີ 15 ກໍລະກົດ 2026

## ໜັງສືແຈ້ງເຊີນປະມູນ

1. ກົມຄຸ້ມຄອງພາຫະນະ-ຂົນສົ່ງ ກົມໃຫຍ່ພະລາທິການ ປ້ອງກັນຄວາມສະຫງົບ ໃນນາມຕາງໜ້າຄະນະຮັບຜິດຊອບຈັດຊື້ເຄື່ອງອຸປະກອນເຕັກນິກ ຮັບໃຊ້ວຽກງານລວມ ຂອງກົມກອງ, ຂໍເຊີນບັນດາບໍລິສັດ, ຫ້າງຮ້ານ ແລະ ຕົວແທນຈຳໜ່າຍ ທີ່ສົນໃຈ ແລະ ມີຄຸນນະວຸດທີ່ເໝາະສົມ ທີ່ດຳເນີນກິດຈະການສະໜອງສິນຄ້າປະເພດເຄື່ອງອຸປະກອນເຕັກນິກ ເຂົ້າຮ່ວມປະມູນ, ກຳນົດມອບສິນຄ້າ 30 ວັນ, ພາຍຫຼັງເຈົ້າຂອງໂຄງການສັ່ງຊື້;

2. ການປະມູນຈະດຳເນີນຕາມຂັ້ນຕອນ ການປະມູນເປີດກ້ວາງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;

3. ການປະມູນນີ້ໃນຄັ້ງນີ້ ອະນຸຍາດໃຫ້ທຸກ ບໍລິສັດ, ຫ້າງຮ້ານ ແລະ ຕົວແທນຈຳໜ່າຍ ທີ່ມີຄຸນວຸດທິເໝາະສົມສົນໃຈເຂົ້າຮ່ວມແຂ່ງຂັນການປະມູນ, ສາມາດຕິດຕໍ່ພົວພັນເອກະສານປະມູນໄດ້ທີ່ ກົມຄຸ້ມຄອງພາຫະນະ-ຂົນສົ່ງ ກົມໃຫຍ່ພະລາທິການ ປ້ອງກັນຄວາມສະຫງົບ ທີ່ຕັ້ງຢູ່ ບ້ານພະໂພ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ເບີໂທ: 020 98343072;

4. ເອກະສານປະມູນເລີ່ມຂາຍແຕ່ວັນທີ 15 ກໍລະກົດ2026 ເຖິງ ວັນທີ 20 ສິງຫາ 2026 (ໃນໂມງລັດຖະການ), ໃນລາຄາ 200,000 ກີບ/ຊອງ, ວິທີການຊຳລະເປັນເງິນສົດ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ຈະໄດ້ນຳໃຊ້ເຂົ້າໃນວຽກງານປະມູນ;

5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:25 ໂມງ, ຂອງວັນທີ 20 ສິງຫາ 2026 ຊອງປະມູນທຸກໆຊອງຈະໄດ້ເປີດໃນວັນທີ 20 ສິງຫາ 2026 ເວລາ 09:25 ໂມງ ທີ່ຫ້ອງປະຊຸມຊັ້ນ II ອາຄານຫຼັງໃໝ່ ຂອງກົມໃຫຍ່ພະລາທິການ ປ້ອງກັນຄວາມສະຫງົບ ທີ່ຕັ້ງຢູ່: ບ້ານພະໂພ, ເມືອງສີສັດຕະນາກ, ນະຄອນ ຫຼວງວຽງຈັນ, ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມ. ຫາກຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດ;

6. ທຸກໆຊອງປະມູນ ຕ້ອງປະກອບການຄ້ຳປະກັນການປະມູນ ດ້ວຍເງິນສົດ, ໜັງສືຄ້ຳປະກັນອອກໂດຍທະນາຄານ, ເຊັກ (ວີຊາ) ບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາບໍລິສັດ, ຫ້າງຮ້ານ ແລະ ຕົວແທນຈຳໜ່າຍ ເຄື່ອງອຸປະກອນເຕັກນິກ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

**ຫົວໜ້າ ກົມຄຸ້ມຄອງພາຫະນະ-ຂົນສົ່ງ**

ພູມີ ທຳມະວົງ